JDB
ທະນາຄານຮ່ວມພັດທະນາ

| **Position ID:** | EXC_DTA/ITD |
|---|---|

# ລາຍລະອຽດຂອງໜ້າວຽກ ແລະ ເງື່ອນໄຂການສະໝັກ

**ຊື່ຕຳແໜ່ງ:** ພະນັກງານ ຄຸ້ມຄອງລະບົບຖານຂໍ້ມູນ

**Position Name:** ***Database Administrator***

## ❖ ໜ້າທີ່ຮັບຜິດຊອບຫຼັກ (ToR):

- ຄຸ້ມຄອງ, ຕິດຕັ້ງ ແລະ ຕິດຕາມ ລະບົບ Infrastructure, Servers ຂອງລະບົບໂປຣແກຣມທະນາຄານ Core Banking System;
- ບໍລິຫານຈັດການ, ຕິດຕັ້ງ ແລະ ຕິດຕາມ ລະບົບປະຕິບັດການ OS ໃນເຊີເວີ ຂອງລະບົບໂປຣແກຣມທະນາຄານ Core Bank ແລະ OS ຂອງລະບົບອື່ນໆ ທີ່ກ່ຽວຂ້ອງ;
- ບໍລິຫານຈັດການ Middleware, Application ຫຼື ໂປຣແກຣມຕ່າງໆ ທີ່ໃຊ້ສຳລັບໂປຣແກຣມທະນາຄານ Core Bank;
- ສະໜັບສະໜູນ ແລະ ແກ້ໄຂບັນຫາກ່ຽວກັບ Infrastructure, Servers ແລະ ລະບົບຕ່າງໆທີ່ກ່ຽວຂ້ອງກັບໂປຣແກຣມທະນາຄານ ທັງພາຍໃນ ແລະ ພາຍນອກ;
- ເປັນວິຊາການສຳຮອງ ໃຫ້ແກ່ວິຊາການຫຼັກ ໃນວຽກງານການຄຸ້ມຄອງ ແລະ ບໍລິຫານຈັດການ ລະບົບຖານຂໍ້ມູນ (Oracle Database);
- ສ້າງຄູ່ມືການປະຕິບັດວຽກ ກ່ຽວກັບວຽກງານທີ່ຕົນຮັບຜິດຊອບ;
- ປະຕິບັດວຽກງານອື່ນໆຕາມການມອບໝາຍ ຂອງຄະນະພະແນກໄອທີ ຫຼື ຄະນະອຳນວຍການທະນາຄານຮ່ວມພັດທະນາ.

## ❖ ວຸດທິການສຶກສາ (Academic Background):

- ຜູ້ທີ່ສະໝັກໃນຕຳແໜ່ງນີ້ຈະຕ້ອງຮຽນຈົບລະດັບ ປະລິນຍາຕີ ຂຶ້ນໄປໃນສາຂາວິຊາ:
  - ວິສະວະກຳໄອທີ;
  - ວິສະວະກຳຄອມພິວເຕີ;
  - ວິທະຍາສາດຄອມພິວເຕີ ຫຼື ສາຂາທີ່ກ່ຽວຂ້ອງ.

## ❖ ກ່ຽວກັບຜູ້ສະໝັກ (About Applicant):

- ມີຄວາມຮູ້ຄວາມສາມາດໃນການບໍລິການຈັດການຖານຂໍ້ມູນ ເຊັ່ນ: Oracle Database, SQL Server, MySQL, Maria DB, Mango DB ແລະ ອື່ນໆ;
- ມີຄວາມຮູ້ຄວາມສາມາດດ້ານການຄຸ້ມຄອງ ແລະ ບໍລິຫານຈັດການລະບົບ Infrastructure ຫຼື Server ເຊັ່ນ: Oracle Server, Dell, IBM, Nutanix ແລະ ອື່ນໆ;
- ມີຄວາມຮູ້ ແລະ ສາມາດນຳໃຊ້ລະບົບປະຕິບັດການ ທັງລະບົບ Windows ແລະ Unix ເຊັ່ນ: Solaris, Oracle Linux, Linux Red hat ແລະ ອື່ນໆ;
- ເປັນຄົນທີ່ມີວິໄນ ໃນການເຮັດວຽກ ໂດຍສະເພາະການຮັກສາຄວາມລັບການເຂົ້າເຖິງຂໍ້ມູນຕ່າງໆ ຂອງອົງກອນ ແລະ ຂໍ້ມູນຂອງລູກຄ້າທະນາຄານ;
- ເປັນຄົນທີ່ບໍ່ເຄີຍກໍ່ຄະດີອາຍາ ແລະ ບໍ່ເຄີຍຖືກຕັດອິດສະພາບມາກ່ອນ;
- ຜູ້ສະໝັກຈະຕ້ອງມີຄວາມຮູ້ຄວາມສາມາດໃນການສື່ສານເປັນທັງພາສາລາວ ແລະ ອັງກິດໃນລະດັບດີ, ຖ້າຮູ້ພາສາຕ່າງປະເທດໃດໜຶ່ງເພີ່ມຍິ່ງເປັນການດີ.